ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0320 /ຫອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 05 FEB 2016

ເຖິງ : ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ : ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍ ສູນການຄ້າ ແລະ ຮ້ານສັບພະສິນຄ້າ ສະບັບເລກທີ 1950/ອຄ.ຄພນ, ລົງວັນທີ 22/09/2015.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ສູນການຄ້າ ແລະ ຮ້ານສັບພະສິນຄ້າ ສະບັບເລກທີ 1950/ອຄ.ຄພນ, ລົງວັນທີ 22/09/2015.

- ອີງຕາມ ທິດຊີ້ນຳຂອງທ່ານລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ, ຄັ້ງວັນທີ 27/01/2016.

ເພື່ອໃຫ້ ສູນການຄ້າ ແລະ ຮ້ານສັບພະສິນຄ້າ ໃນຂອບເຂດທົ່ວປະເທດ ທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວກ່ອນ ແລະ ຫຼັງ ຂໍ້ຕົກລົງວ່າດ້ວຍ ສູນການຄ້າ ແລະ ຮ້ານສັບພະສິນຄ້າ ສະບັບເລກທີ 1950/ອຄ.ຄພນ, ລົງວັນທີ 22/09/2015 ໃຫ້ສືບຕໍ່ດຳເນີນ ຢ່າງມີປະສິດທິຜົນ ແລະ ເຂົ້າສູ່ລະບຽບການທີ່ວາງອອກ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ສະເໜີມາຍັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ປະຕິບັດດັ່ງນີ້:

1. ແຕ່ງຕັ້ງຄະນະວິຊາການ ລົງເຜີຍແຜ່ ແລະ ແນະນຳການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍ ສູນການຄ້າ ແລະ ຮ້ານສັບພະສິນຄ້າ ສະບັບເລກທີ 1950/ອຄ.ຄພນ, ລົງວັນທີ 22/09/2015 ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ບັນດາຕົວເມືອງໃຫ່ຍ ແລະ ຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ນະຄອນຫຼວງ;

2. ໃຫ້ເຮັດບົດບັນທຶກກັບບັນດາສູນການຄ້າ ແລະ ຮ້ານສັບພະສິນຄ້າ ທີ່ໄດ້ສ້າງຕັ້ງກ່ອນຂໍ້ຕົກລົງສະບັບນີ້ວາງອອກຕາມລະບຽບການ;

3. ມອບໃຫ້ເຈົ້າໜ້າທີ່ກວດກາການຄ້າ ສົມທົບກັບຂະແໜງທະບຽນ ແລະ ຄຸ້ມຄອງວິສາຫະກິດ ເປັນຜູ້ດຳເນີນການກວດກາ ເປັນຕົ້ນ: ການຂຶ້ນທະບຽນວິສາຫະກິດຂອງຜູ້ລົງທຶນສ້າງຕັ້ງສູນການຄ້າ ແລະ ຮ້ານສັບພະສິນຄ້າ ແລະ ການຂຶ້ນທະບຽນວິສາຫະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າ ທີ່ຕັ້ງຢູ່ແຂວງຂອງຕົນ;

4. ໃຫ້ລາຍງານສະພາບການເຄື່ອນໄຫວ ແລະ ຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມາຍັງກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຮັກສາການຫົວໜ້າຫ້ອງການ

ຕິດຕໍ່ພົວພັນ:
ບຸນພາມາ ວົງຄຳຊາວ
ໂທ: 020 54142411
E-mail: bounphama_vong@hotmail.com